# ຫຼັກເກນ ແລະຮູບແບບການຈັດພິມບົດຄວາມ
# ເພື່ອຕີພິມໃນວາລະສານ ວິໄຈ ແລະພັດທະນາການຮຽນ-ການສອນ
# ວິທະຍາໄລຄູປາກເຊ

## ຫຼັກເກນໃນການພິຈາລະນາບົດຄວາມ

1. ເປັນບົດວິໄຈທາງການສຶກສາ, ບົດວິໄຈທາງວິທະຍາສາດ, ສັງຄົມສາດ ຫຼື ບົດວິໄຈປະຕິບັດການໃນຫ້ອງຮຽນ
2. ບໍ່ເຄີຍຕີພິມໃນວາລະສານອື່ນມາກ່ອນ
3. ເປັນບົດຄວາມທີ່ມີຄຸນຄ່າທາງດ້ານວິຊາການ ຄື ເກີດຂຶ້ນຈາກຜູ້ຂຽນໄດ້ທຳການທົດລອງ ສ້າງສັນສະເໜີເຖິງແນວຄວາມຄິດ ຫຼືຫຼັກການໃໝ່ທີ່ເປັນໄປໄດ້ ແລະ ມີທິດສະດີປະກອບ ຫຼືສະໜັບສະໜຸນຢ່າງພຽງພໍ ມີປະໂຫຍດຕໍ່ການສຶກສາ ແລະ ການວິໄຈ
4. ບໍ່ໄດ້ລອກລຽນແບບ ຫຼືກ່າຍມາຈາກຜົນງານການວິໄຈຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ແລະບໍ່ມີການອ້າງອີງທີ່ຖືກຕ້ອງ
5. ຜູ້ຂຽນຕ້ອງຈັດຕຽມຕົ້ນສະບັບຂອງບົດຄວາມຕາມຮູບແບບທີ່ກຳນົດ
6. ບົດຄວາມຕ້ອງຜ່ານການກວດສອບຈາກບັນນາທິການວາລະສານ

## ຮູບແບບການກຽມຕົ້ນສະບັບບົດຄວາມ

1. ການພິມຕົ້ນສະບັບຕ້ອງພິມດ້ວຍຄອມພິວເຕີ້ ໂປຼແກຼມ Microsoft Word
2. ໃຊ້ເຈັ້ຍ A4 (21 x 29.7 ຊມ) ໄລຍະຫ່າງຈາກຂອບເຈັ້ຍເບື້ອງຊ້າຍ 1,5 ນີ້ວ (3,8 ຊມ) ເບື້ອງຂວາ 1 ນີ້ວ (2,5 ຊມ) ເບື້ອງເທິງ 1 ນີ້ວ (2,5 ຊມ) ເບື້ອງລຸ່ມ 1 ນີ້ວ (2,5 ຊມ)
3. ມີຄວາມຍາວລະຫວ່າງ 12 ຫາ 15 ໜ້າ ເຈັ້ຍ A4
4. ຮູບແບບຕົວອັກສອນ ພາສາລາວໃຊ້ຮູບແບບຕົວອັກສອນ Phetsarath OT ຂະໜາດ 12 pt. ຮູບແບບຕົວອັກສອນພາສາອັງກິດ ແລະ ຕົວເລກໃຊ້ຮູບແບບຕົວອັກສອນ Times New Roman ຂະໜາດ 12 pt. (Phetsalath OT + Time New Roman)
5. ການຈັດແນວຂໍ້ຄວາມໃຫ້ໃຊ້ການຈັດກະຈາຍຂໍ້ຄວາມແບບ (Lao/Thai Distributed) (ສະເໝີກັນທາງຊ້າຍ ແລະ ທາງຂວາ)
6. ຮູບແບບ ແລະ ການຈັດວາງຕຳແໜ່ງຂໍ້ຄວາມ
    1. ຊື່ເລື່ອງພາສາລາວ / ພາສາອັງກິດ ໃຊ້ຕົວອັກສອນ ຂະໜາດ 14 pt. ຕົວໜາ (Bold) ຈັດຢູ່ເຄິ່ງກາງເຈັ້ຍ
    2. ຊື່ຜູ້ຂຽນ ໃຊ້ຕົວອັກສອນ ຂະໜາດ 10 pt. ຕົວໜາ (Bold) ຈັດຢູ່ເຄິ່ງກາງເຈັ້ຍ
    3. ຫົວຂໍ້ບົດຄັດຫຍໍ້ (Abstract) ໃຊ້ຕົວອັກສອນ ຂະໜາດ 14 pt. ຕົວໜາ (Bold) ຈັດຢູ່ເຄິ່ງກາງເຈັ້ຍ
    4. ເນື້ອໃນບົດຄັດຫຍໍ້ (Abstract) ໃຊ້ຕົວອັກສອນ ຂະໜາດ 12 pt. ຕົວປົກກະຕິ ຈັດພິມເປັນ 1 Column ແຖວທຳອິດ ຫຍໍ້ໜ້າ 1 ແທັບ (0,75”) ຈາກດ້ານຊ້າຍເຈັ້ຍ

5. ຄຳສຳຄັນ (Keywords) ໃຊ້ຕົວອັກສອນ ຂະໜາດ 12 pt. ຕົວໜາ (Bold) ຈັດຢູ່ເບື້ອງຊ້າຍ ເຈັ້ຍ ຈຳນວນຄຳສຳຄັນ 3-6 ຄຳ ໃຊ້ເຄື່ອງໝາຍຈຸດ (,) ຫຼັງແຕ່ລະຄຳ
6. ຫົວຂໍ້ຫຼັກ ໃຊ້ຕົວອັກສອນ ຂະໜາດ 14 pt. ຕົວໜາ (Bold) ຈັດຢູ່ເບື້ອງຊ້າຍ
7. ຂໍ້ຄວາມປົກກະຕິ ໃຊ້ຕົວອັກສອນ ຂະໜາດ 12 pt. ຕົວປົກກະຕິ ແຖວທຳອິດ ຫຍໍ້ໜ້າ 1 ແທັບ (0,75”) ຈາກດ້ານຊ້າຍເຈັ້ຍ
8. ການອ້າງອີງແຊກສອດໃນເນື້ອຫາໃຫ້ໃສ່ຊື່ຜູ້ແຕ່ງ, (ປີພິມ: ໜ້າ) ດັ່ງຕົວຢ່າງຮູບແບບດັ່ງນີ້

    ຊື່ ນາມສະກຸນ (ປີພິມ) ກ່າວວ່າ ຂໍ້ຄວາມອ້າງອີງ......

    ຂໍ້ຄວາມອ້າງອີງ......(ຊື່ ນາມສະກຸນ, ປີພິມ)

    ຂໍ້ຄວາມອ້າງອີງ......(ຊື່ ນາມສະກຸນ, ປີພິມ : ໜ້າ)

9. ການຂຽນບັນນານຸກົມ ໃຊ້ແບບ APA ມີລາຍລະອຽດເພີ້ມເຕີມ

**ສ່ວນປະກອບບົດຄວາມ**

ໃຫ້ລຽງລຳດັບດັ່ງນີ້:

1. **ຊື່ເລື່ອງ**

   ຄວນກະທັດຮັດ ບອກຈຸດປະສົງເປົ້າໝາຍຕົ້ນຕໍຂອງການວິໄຈ ບໍ່ໃຊ້ຄຳຫຍໍ້ ມີຄວາມຍາວບໍ່ເກີນ 100 ຕົວອັກສອນ ເປັນພາສາລາວ ແລະ ພາສາອັງກິດ ໂດຍຂຽນຊື່ພາສາລາວຂຶ້ນກ່ອນ
2. **ຊື່ຜູ້ຂຽນ**

   ລະບຸຊື່ເຕັມ ນາມສະກູນເຕັມ ຂອງຜູ້ຂຽນ ຄົບທຸກຄົນ ເປັນພາສາລາວ ບອກຕຳແໜ່ງ ແລະໜ່ວຍງານສັງກັດ
3. **ບົດຄັດຫຍໍ້**

   ມີທັງພາສາລາວ ແລະ ພາສາອັງກິດ ມີຄວາມຍາວບໍ່ເກີນ 250 ຄຳ ຫຼື 15 ແຖວ ໂດຍຂຽນບົດຄັດຫຍໍ້ພາສາລາວກ່ອນ ແລະ (Abstract) ພາສາອັງກິດ ທີ່ມີເນື້ອໃນກົງກັນ
4. **ຄຳສຳຄັນ**

   ໃຫ້ລະບຸທັງພາສາລາວ ແລະ ພາສາອັງກິດ 3-6 ຄຳ ເພື່ອປະໂຫຍດໃນການນຳໄປໃຊ້ໃນການເລືອກຫຼືຄົ້ນຫາເອກະສານ ໃສ່ທ້າຍບົດຄັດຫຍໍ້ ແຕ່ລະພາສາ
5. **ບົດນຳ**

   ກ່າວເຖິງ ຄວາມເປັນມາ ແລະ ຄວາມສຳຄັນ ເຫດຜົນທີ່ນຳໄປສູ່ການສຶກສາວິໄຈ ຄວນມີການອ້າງອີງຜົນງານທາງວິຊາການ, ວັນນະກຳ ຫຼືຜົນງານການວິໄຈທີ່ກ່ຽວຂ້ອງ
6. **ຈຸດປະສົງ**

   ຊີ້ແຈງຈຸດປະສົງຂອງການວິໄຈເປັນຂໍ້ໆ
7. **ຂອບແນວຄວາມຄິດ (ຖ້າມີ)**
8. **ສົມມຸດຖານການວິໄຈ (ຖ້າມີ)**
9. **ວິທີດຳເນີນການວິໄຈ**

   ອະທິບາຍຂັ້ນຕອນ ຂະບວນການວິໄຈ ວິທີເລືອກກຸ່ມຕົວຢ່າງໃຫ້ຊັດເຈນ, ວິທີການເກັບລວບລວມຂໍ້ມູນ, ເຄື່ອງມື ແລະ ການໃຊ້ເຄື່ອງມືການວິໄຈ, ສະຖິຕິທີ່ໃຊ້ໃນການວິໄຈ ແລະ ການວິເຄາະຂໍ້ມູນ
10. **ຜົນການວິໄຈ**

ສະເໜີຜົນການວິໄຈຢ່າງຊັດເຈນ ກົງກັບປະເດັນ ບັນຫາ ຄວນມີແຜນພູມ ແຜນວາດ ແລະ/ຫຼື ຕາຕະລາງປະກອບ ການອະທິບາຍ ການອະທິບາຍຜົນຕ້ອງບໍ່ຊໍ້າກັບຕາຕະລາງ ແລະຮູບພາບນັ້ນ

**11. ສະຫຼຸບແລະຂໍ້ສະເໜີແນະ**

ຊີ້ແຈງວ່າຜົນການສຶກສາ ຫຼືຜົນການວິໄຈ ສອດຄ່ອງກັບຈຸດປະສົງການວິໄຈ ຫຼືແຕກຕ່າງກັບຜົນງານອື່ນທີ່ມີການນຳສະເໜີມາກ່ອນ ຫຼືບໍ່ ແນວໃດ ຄວນໃຊ້ການບັນຍາຍ ແລະ ໃຫ້ຂໍ້ສະເໜີແນະ

**12. ຕາຕະລາງຮູບພາບແຜນພູມ**

ຄັດເລືອກສະເພາະທີ່ຈຳເປັນມີຄຳອະທິບາຍສື່ຄວາມໝາຍໄດ້ສາລະຄົບຖ້ວນ ໃນກໍລະນີຕາຕະລາງ ຄຳອະທິບາຍຢູ່ເທິງຕາຕະລາງ ເບື້ອງຊ້າຍ ກໍລະນີເປັນຮູບພາບ ຄຳອະທິບາຍຢູ່ລຸ່ມຮູບພາບ ເບື້ອງຊ້າຍ

**13. ເອກະສານອ້າງອີງ**

ລາຍການເອກະສານອ້າງອີງທີ່ໃຊ້ເປັນຫຼັກໃນການຄົ້ນຄວ້າວິໄຈ ໃຫ້ຈັດລຽງຕາມຕົວອັກສອນ ໂດຍເລີ່ມຈາກຕົວອັກສອນ ພາສາລາວ ຕາມດ້ວຍຕົວອັກສອນພາສາອັງກິດ ໂດຍໃຊ້ລະບົບການອ້າງອີງແບບ APA (American Psychological Association) ມີຮູບແບບດັ່ງນີ້:

**ອ້າງອີງຈາກປຶ້ມ**

ຊື່/ນາມສະກຸນ.//(ປີພິມ).//**ຊື່ປຶ້ມ.**//(ຄັ້ງທີພິມ).//ສະຖານທີ່ພິມ/://ສານັກພິມ.

////////(ຖ້າມີຂໍ້ຄວາມເປັນແຖວທີ 2,3...)

**ບົດຄວາມວາລະສານ**

ຊື່/ນາມສະກຸນ.//(ວັນທີ/ເດືອນ/ປີ).//ຊື່ບົດຄວາມ.//**ຊື່ວາລະສານ**./ປີທີຫຼືເຫຼັ້ມ(ສະບັບທີ)./ໜ້າ/ເລກໜ້າ-ໜ້າ.

**ບົດຄວາມໃນໜັງສືພິມ**

ຊື່/ນາມສະກຸນ.//(ວັນທີ/ເດືອນ/ປີ).//ຊື່ບົດຄວາມ.//**ຊື່ໜັງສືພິມ**./ໜ້າ/ເລກໜ້າ.

**ວິທະຍານິພົນ**

ຊື່/ນາມສະກຸນ.//(ປີພິມ).//**ຊື່ວິທະຍານິພົນ**.//ລະດັບວິທະຍານິພົນ./ສາຂາວິຊາ/ຄະນະ/ມະຫາວິທະຍາໄລ.

**ຂໍ້ມູນອອນລາຍ**

ຊື່ຜູ້ແຕ່ງ.//(ປີພິມ).//ຊື່ເລື່ອງ.//[ປະເພດສື່].//ສືບຄົ້ນຈາກ//:/ຊື່ແຫລ່ງທີ່ໃຫ້ບໍລິການອິນເຕີແນັດ.//ວັນທີ/ເດືອນ/ປີ ຄົ້ນຂໍ້ມູນ).

**(ໝາຍເຫດ: " / " ໝາຍເຖິງ: ການນັບໄລຍະຫ່າງ 1 ຕົວອັກສອນ ຫຼື ຍະວ່າງ 1 space)**